ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈໍາ

ເລກທີ 135 / ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 10 / 04 / 25

# ມະຕິ

## ຂອງຄະນະປະຈໍາສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງເອົາ ລັດຖະບັນຍັດວ່າດ້ວຍ
## ການຄຸ້ມຄອງອາກອນແບບເດັດຖານ ແລະ ຄ່າທໍານຽມ ສໍາລັບທຸລະກິດກາຊີໂນ

- ອີງຕາມລັດຖະທໍາມະນູນ ແຫ່ງ ສປປ ລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025 ມາດຕາ 57 ສິດ ແລະ ໜ້າທີ່ຂອງຄະນະປະຈໍາສະພາແຫ່ງຊາດ;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 33;
- ອີງຕາມໜັງສືສະເໜີຂອງລັດຖະບານ ສະບັບເລກທີ 41/ລບ, ລົງວັນທີ 31 ມີນາ 2025;
- ອີງຕາມຜົນຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງວັນທີ 1 ເມສາ 2025.

### ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ເຫັນດີຮັບຮອງເອົາ ລັດຖະບັນຍັດວ່າດ້ວຍການຄຸ້ມຄອງອາກອນເດັດຖານ ແລະ ຄ່າທໍານຽມ ສໍາລັບທຸລະກິດກາຊີໂນ ຕາມການສະເໜີຂອງລັດຖະບານ ແລະ ປັບປຸງຕາມຄໍາເຫັນຂອງຄະນະປະຈໍາສະພາແຫ່ງຊາດ ດັ່ງນີ້:

1) ໂຄງປະກອບ ມີ 8 ມາດຕາ:
- ມາດຕາ 1 ຈຸດປະສົງ;
- ມາດຕາ 2 ອາກອນເດັດຖານ ແລະ ຄ່າທໍານຽມຜ່ານປະຕູ;
- ມາດຕາ 3 ປະເພດໂຕະໄພ້ທີ່ໃຫ້ບໍລິການ;
- ມາດຕາ 4 ການກໍານົດອາກອນເດັດຖານ;
- ມາດຕາ 5 ການກໍານົດຄ່າທໍານຽມ;
- ມາດຕາ 6 ການຄຸ້ມຄອງ;
- ມາດຕາ 7 ການຈັດຕັ້ງປະຕິບັດ;
- ມາດຕາ 8 ຜົນສັກສິດ.

2) ກໍານົດອາກອນເດັດຖານ ສໍາລັບທຸລະກິດກາຊີໂນ ຕໍ່ປີ ຕາມຂັ້ນ ດັ່ງນີ້:

- ຂັ້ນໜຶ່ງ: 3,000,000 (ສາມລ້ານ) ໂດລາສະຫະລັດ;
- ຂັ້ນສອງ: 4,000,000 (ສີ່ລ້ານ) ໂດລາສະຫະລັດ;
- ຂັ້ນສາມ: 6,000,000 (ຫົກລ້ານ) ໂດລາສະຫະລັດ;
- ຂັ້ນສີ່: 8,000,000 (ແປດລ້ານ) ໂດລາສະຫະລັດ.

ກໍລະນີ ໂຕະໄພ້ ເກີນ ຂັ້ນສີ່ ໃຫ້ເສຍອາກອນເດັດຖານຕໍ່ປີ ຕາມໂຕະໄພ້ທີ່ເກີນ ດັ່ງນີ້:

1) ໂຕະໄພ້ທໍາມະດາ 75,000 (ເຈັດສິບຫ້າພັນ) ໂດລາສະຫະລັດ ຕໍ່ໂຕະ ຕໍ່ປີ ທີ່ເກີນ;

2) ໂຕະໄພ້ວີໄອພີ 100,000 (ໜຶ່ງແສນ) ໂດລາສະຫະລັດ ຕໍ່ໂຕະ ຕໍ່ປີ ທີ່ເກີນ.

3) ສໍາລັບຕູ້ເກມໃຫ້ເສຍອາກອນເດັດຖານໃນອັດຕາ 3,000 (ສາມພັນ) ໂດລາສະຫະລັດ ຕໍ່ຕູ້ຕໍ່ປີ;

4) ສໍາລັບ ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ມີພູມລໍາເນົາຢູ່ ສປປ ລາວ ເຂົ້າໃຊ້ບໍລິການຢູ່ກາຊີໂນ ໃຫ້ເສຍຄ່າທໍານຽມຜ່ານປະຕູ 200 (ສອງຮ້ອຍ) ໂດລາສະຫະລັດ ຕໍ່ຄົນຕໍ່ຄັ້ງ.

ການເກັບອາກອນເດັດຖານ ແລະ ການເກັບຄ່າທໍານຽມ ແມ່ນ ເກັບເປັນເງິນໂດລາສະຫະລັດ.

ມອບໃຫ້ລັດຖະບານ ອອກລະບຽບການເພື່ອຄຸ້ມຄອງທຸລະກິດກາຊີໂນ ຢູ່ ສປປ ລາວ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຄະນະປະຈໍາສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ..001......../ປປທ

ນະຄອນຫຼວງວຽງຈັນ, ວັນທີ..07 ພຶດສະພາ 2025

# ລັດຖະບັນຍັດ

## ວ່າດ້ວຍການຄຸ້ມຄອງອາກອນເດັດຖານ ແລະ ຄ່າທຳນຽມ ສຳລັບທຸລະກິດກາຊີໂນ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງປີ 2025) ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 135/ຄປຈ, ລົງວັນທີ 10 ເມສາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 30/ຄປຈ, ລົງວັນທີ 10 ເມສາ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດ ອັດຕາອາກອນເດັດຖານ ແລະ ຄ່າທຳນຽມ ສຳລັບທຸລະກິດກາຊີໂນ ແລະ ຄ່າທຳນຽມຜ່ານປະຕູເຂົ້າໃຊ້ບໍລິການ ເພື່ອຄຸ້ມຄອງ ແລະ ຈັດເກັບລາຍຮັບພັນທະອາກອນ ໃນທຸລະກິດດັ່ງກ່າວ ເຂົ້າງົບປະມານແຫ່ງລັດ ໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ, ຄົບຖ້ວນ, ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ອາກອນເດັດຖານ ແລະ ຄ່າທຳນຽມຜ່ານປະຕູ**

ອາກອນເດັດຖານ ແມ່ນພັນທະທີ່ກຳນົດເກັບ ຕາມປະເພດໂຕະໄພ້ໃຫ້ບໍລິການໃນແຕ່ລະຂັ້ນ ແລະ ຕູ້ເກມ ສຳລັບທຸລະກິດກາຊີໂນ.

ຄ່າທຳນຽມຜ່ານປະຕູເຂົ້າໃຊ້ບໍລິການກາຊີໂນ ແມ່ນພັນທະທີ່ເກັບ ຈາກ ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ມີພູມລຳເນົາຢູ່ ສປປ ລາວ.

**ມາດຕາ 3 ປະເພດໂຕະໄພ້ໃຫ້ບໍລິການ**

ໂຕະໄພ້ໃຫ້ບໍລິການ ຕ້ອງແມ່ນໂຕະໄພ້ ທີ່ອອກແບບສະເພາະ ຊຶ່ງປະກອບເຂົ້າໃສ່ຕຶກອາຄານຢູ່ສະຖານທີ່ບໍລິການທີ່ໄດ້ຮັບອະນຸຍາດ ແລະ ຂຶ້ນບັນຊີນຳກະຊວງການເງິນ.

ໂຕະໄພ້ໃຫ້ບໍລິການ ປະກອບມີ 2 ປະເພດ ຄື: ໂຕະໄພ້ທຳມະດາ ແລະ ໂຕະໄພ້ວີໄອພີ (VIP) ຊຶ່ງຈັດແບ່ງເປັນຂັ້ນ ດັ່ງນີ້:

1) ຂັ້ນ 1: ໂຕະໄພ້ທຳມະດາ ສີ່ສິບໂຕະ ລົງມາ ແລະ ບໍ່ມີໂຕະໄພ້ວີໄອພີ;
2) ຂັ້ນ 2: ໂຕະໄພ້ທຳມະດາ ສີ່ສິບເອັດ ຫາ ຫົກສິບໂຕະ ແລະ ໂຕະໄພ້ວີໄອພີ ຕໍ່າກວ່າ ຊາວໂຕະ;
3) ຂັ້ນ 3: ໂຕະໄພ້ທຳມະດາ ຫົກສິບເອັດໂຕະ ຫາ ແປດສິບໂຕະ ແລະ ໂຕະໄພ້ວີໄອພີ ຊາວໂຕະ ຫາ ສາມສິບເກົ້າ ໂຕະ;
4) ຂັ້ນ 4: ໂຕະໄພ້ທຳມະດາ ແຕ່ ແປດສິບເອັດໂຕະ ຫາ ໜຶ່ງຮ້ອຍໂຕະ ແລະ ໂຕະໄພ້ວີໄອພີ ສີ່ສິບໂຕະຂຶ້ນໄປ ແຕ່ບໍ່ໃຫ້ເກີນ ຫ້າສິບໂຕະ.

ໃນກໍລະນີ ທຸລະກິດກາຊິໂນ ມີຄວາມຕ້ອງການ ເພີ່ມ ຫຼື ຫຼຸດ ຈຳນວນໂຕະໄພ້ ທີ່ບໍ່ມີການປ່ຽນແປງລະດັບຂັ້ນຕາມທີ່ໄດ້ກຳນົດໄວ້ໃນວັກທີສອງຂອງມາດຕານີ້ ຕ້ອງຂໍອະນຸຍາດ ແລະ ຂຶ້ນບັນຊີນຳກະຊວງການເງິນ. ສຳລັບການເພີ່ມ ຫຼື ຫຼຸດ ຈຳນວນໂຕະໄພ້ທີ່ເຮັດໃຫ້ມີການປ່ຽນແປງລະດັບຂັ້ນ ຈາກຂັ້ນໜຶ່ງໄປເປັນອີກຂັ້ນໜຶ່ງ ຕ້ອງຂໍອະນຸຍາດນຳລັດຖະບານ ແລະ ຂຶ້ນບັນຊີໂຕະໄພ້ນຳກະຊວງການເງິນ.

**ມາດຕາ 4 ການກຳນົດອາກອນເດັດຖານ**

ທຸລະກິດກາຊິໂນ ຕ້ອງໄດ້ເສຍອາກອນເດັດຖານ ດັ່ງນີ້:

1. ສຳລັບທຸລະກິດກາຊິໂນ ໃຫ້ເສຍອາກອນເດັດຖານຕໍ່ປີ ຕາມແຕ່ລະປະເພດຂັ້ນ:
   1) ຂັ້ນ 1: 3,000,000 (ສາມລ້ານ) ໂດລາສະຫະລັດ;
   2) ຂັ້ນ 2: 4,000,000 (ສີ່ລ້ານ) ໂດລາສະຫະລັດ;
   3) ຂັ້ນ 3: 6,000,000 (ຫົກລ້ານ) ໂດລາສະຫະລັດ;
   4) ຂັ້ນ 4: 8,000,000 (ແປດລ້ານ) ໂດລາສະຫະລັດ.

   ໃນກໍລະນີ ໂຕະໄພ້ ເກີນ ຂັ້ນສີ່ ໃຫ້ເສຍອາກອນເດັດຖານຕໍ່ປີ ຕາມໂຕະໄພ້ ດັ່ງນີ້:
   1) ໂຕະໄພ້ທຳມະດາ 75,000 (ເຈັດສິບຫ້າພັນ) ໂດລາສະຫະລັດ ຕໍ່ໂຕະ ຕໍ່ປີ;
   2) ໂຕະໄພ້ວີໄອພີ 100,000 (ໜຶ່ງແສນ) ໂດລາສະຫະລັດ ຕໍ່ໂຕະ ຕໍ່ປີ.
2. ສຳລັບ ຕູ້ເກມ ໃຫ້ເສຍອາກອນເດັດຖານ ໃນອັດຕາ 3,000 (ສາມພັນ) ໂດລາສະຫະລັດ ຕໍ່ຕູ້ຕໍ່ປີ.

ອາກອນເດັດຖານນີ້ ບໍ່ກວມ ອາກອນລາຍໄດ້ຈາກເງິນເດືອນ, ອາກອນເງິນປັນຜົນກຳໄລ ແລະ ອາກອນລາຍໄດ້ປະເພດອື່ນ.

ການເກັບອາກອນເດັດຖານ ແມ່ນເກັບເປັນເງິນໂດລາສະຫະລັດ ຕາມລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 5 ການກຳນົດຄ່າທຳນຽມ**

ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ມີພູມລຳເນົາຢູ່ ສປປ ລາວ ທີ່ເຂົ້າໃຊ້ບໍລິການຢູ່ກາຊິໂນ ໃຫ້ເສຍຄ່າທຳນຽມຜ່ານປະຕູ 200 (ສອງຮ້ອຍ) ໂດລາສະຫະລັດ ຕໍ່ຄົນຕໍ່ຄັ້ງ.

ການເກັບຄ່າທຳນຽມ ແມ່ນເກັບເປັນເງິນໂດລາສະຫະລັດ ຕາມລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 6 ການຄຸ້ມຄອງ**

ເພີ່ມທະວີ ການຄຸ້ມຄອງລັດ, ການຈັດເກັບລາຍຮັບອາກອນເດັດຖານ ແລະ ຄ່າທຳນຽມ ຈາກທຸລະກິດກາຊີໂນ ເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ ຄົບຖ້ວນ ແລະ ທັນເປັນທັນສະໄໝ, ຮັບປະກັນຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍ ໃນທຸລະກິດກາຊີໂນດັ່ງກ່າວ ແລະ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບການ.

ມອບໃຫ້ລັດຖະບານ ອອກລະບຽບການ ເພື່ອຄຸ້ມຄອງທຸລະກິດກາຊີໂນ ຢູ່ ສປປ ລາວ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 8 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ